# ຕາຕະລາງຄຳນິຍາມ

## 1. ການນຳໃຊ້

**1.1** ເອກະສານສະບັບນີ້ປະກອບເປັນຕາຕະລາງຄຳນິຍາມຕາມທີ່ໄດ້ກ່າວເຖິງໃນເງື່ອນໄຂການທະນາຄານທົ່ວໄປຂອງ ANZ.

**1.2** ຕາຕະລາງຄຳນິຍາມສະບັບນີ້ເປັນສ່ວນເພີ່ມເຕີ່ມໃຫ້ກັບເງື່ອນໄຂການທະນາຄານທົ່ວໄປຂອງ ANZ. ຄຳສັບທີ່ພິມເປັນໂຕໃຫຍ່ທີ່ຖືກນຳໃຊ້ໃນຕາຕະລາງຄຳນິຍາມສະບັບນີ້ແມ່ນມີຄຳນິຍາມສະເພາະໃນຕາຕະລາງຄຳນິຍາມສະບັບນີ້.

## 2. ການຕີຄຳນິຍາມ ແລະ ກຳນົດຄຳນິຍາມ

### 2.1 ການຕີຄຳນິຍາມ

ໃນຂໍ້ຕົກລົງສະບັບນີ້, ເວັ້ນເສຍແຕ່ວ່າຮູບປະໂຫຍກກຳນົດເປັນຢ່າງອື່ນ:

(ກ) ບຸກຄົນປະກອບມີລັດຖະບານ, ລັດ, ໜ່ວຍງານລັດ, ວິສາຫະກິດ, ກຸ່ມວິສາຫະກິດ, ສະມາຄົມ, ບໍລິສັດຫຸ້ນສ່ວນ ຫຼື ບຸກຄົນໃດໜຶ່ງ;

(ຂ) ບຸກຄົນປະກອບມີຕົວແທນບຸກຄົນທີ່ມີອຳນາດທາງກົດໝາຍ, ຜູ້ດຳລົງຕຳແໜ່ງຕໍ່ ແລະ ຜູ້ທີ່ຖືກມອບໝາຍ;

(ຄ) ຄຳສັບເອກະພົດລວມເອົາຄຳສັບພະຫຸພົດ ແລະ ກົງກັນຂ້າມ;

(ງ) ການອ້າງເຖິງຂໍ້ຕົກລົງ, ເອກະສານ ຫຼື ກົດໝາຍແມ່ນການອ້າງເຖິງຂໍ້ຕົກລົງ, ເອກະສານ ຫຼື ກົດໝາຍ (ແລະ ຂໍ້ກຳນົດ) ຕາມທີ່ໄດ້ປັບປຸງ, ປ່ຽນແປງໃໝ່, ເພີ່ມເຕີ່ມ ຫຼື ແທນໃນແຕ່ລະໄລຍະ; ແລະ

(ຈ) ພາກສ່ວນ, ມາດຕາ, ວັກ ແລະ ຫົວຂໍ້ອື່ນໆແມ່ນເພື່ອຄວາມສະດວກເທົ່ານັ້ນ ແລະ ບໍ່ກະທົບຕໍ່ການແປ.

### 2.2 ຄຳນິຍາມ

**ບັນຊີ** ໝາຍເຖິງບັນຊີທີ່ລູກຄ້າລົງທະບຽນກັບທະນາຄານ.

**ຕົວແທນ** ໝາຍເຖິງບຸກຄົນໃດໜຶ່ງທີ່ຖືກແຕ່ງຕັ້ງໂດຍລູກຄ້າໃຫ້ເປັນຕົວແທນໃນຂໍ້ຕົກລົງ ແລະ ບັນຊີ ແລະ ບໍລິການລວມທັງຜູ້ຮັບຜິດຊອບທີ່ຖືກມອບໝາຍໂດຍທະນາຄານຕ່າງໜ້າລູກຄ້າ ແຕ່ບໍ່ໄດ້ຈຳກັດຄວາມ.

**ສະກຸນເງິນຕາມຕົກລົງ** ໝາຍເຖິງສະກຸນເງິນທີ່ໃຊ້ໃນການຊຳລະບັນຊີ ຫຼື ບໍລິການ ຕາມຂໍ້ຕົກລົງສະບັບນີ້ ໂດຍມີການຕົກລົງກັນລະຫວ່າງລູກຄ້າ ແລະ ທະນາຄານ ຫຼື ຕາມການແຈ້ງການຂອງທະນາຄານໃຫ້ ກັບລູກຄ້າ ຖ້າຫາກບໍ່ມີຂໍ້ຕົກລົງດັ່ງກ່າວ.

**ຂໍ້ຕົກລົງ** ໝາຍ ເຖິງເງື່ອນໄຂ, ຕາຕະລາງປະເທດ, ຕາຕະລາງພາກສ່ວນຄັດຄ້ານ, ຕາຕະລາງບໍລິການທີ່ເໝາະສົມ, ແບບຟອມ ລົງທະບຽນ, ຕາຕະລາງຄ່າທຳນຽມອື່ນໆ ແລະ ຕາຕະລາງ ຄຳນິຍາມສະບັບນີ້.

**ANZ** ໝາຍເຖິງກຸ່ມທະນາຄານອົດສະຕາລີ ແລະ ນິວຊີແລນ ຈຳກັດ ABN 11 005 357 522.

**ບໍລິການຈັດການໜີ້ຄ້າງຮັບຂອງ ANZ** ໝາຍເຖິງບໍລິການເກັບໜີ້ ຫຼື ໜີ້ຄ້າງຮັບ ລວມທັງລັກສະນະດັ່ງລຸ່ມນີ້:

- ບໍລິການເກັບໜີ້ຄ້າງຮັບທາງເອເລັກໂຕນິກທີ່ຝາກໃນບັນຊີ (ຕົວຢ່າງ ບໍລິການໜີ້ໂດຍກົງ);
- ບໍລິການແຊັກ ທີ່ຝາກໃນບັນຊີ (ຕົວຢ່າງ ບໍລິການໄປສະນີ);
- ບໍລິການເງິນສົດ ທີ່ຝາກໃນບັນຊີ (ຕົວຢ່າງເງິນຝາກໂດຍກົງ); ແລະ
- ບໍລິການໄກ່ເກ່ຍ, ການເພີ່ມພູນ ຫຼື ສິ່ງປົກຄຸມທີ່ກ່ຽວຂ້ອງກັບບໍລິການເຫຼົ່ານີ້.

**ອັດຕາທີ່ເໝາະສົມ** ໝາຍເຖິງອັດຕາແລກປ່ຽນທົ່ວໄປຂອງທະນາຄານ ຫຼື ອັດຕາທີ່ກຳນົດໂດຍທະນາຄານຢ່າງສົມເຫດ ສົມຜົນ.

**ແບບຟອມລົງສະໝັກ** ໝາຍເຖິງແບບຟອມໃດໜຶ່ງທີ່ລູກຄ້າລົງລາຍເຊັນໃນການສ້າງບັນຊີ ຫຼື ບໍລິການໃດໜຶ່ງ.

**ບຸກຄົນທີ່ມີອຳນາດເຕັມໃຊ້ສິດ** ໝາຍເຖິງບຸກຄົນທີ່ໄດ້ຮັບອຳນາດຈາກລູກຄ້າ (ຫຼື ຕົວແທນ) ແລະ ແຈ້ງການໃຫ້ທະນາຄານຮັບຮູ້ຢ່າງຖືກຕ້ອງເພື່ອດຳເນີນງານຕາງໜ້າໃຫ້ກັບລູກຄ້າໃນການໃຫ້ຄຳສັ່ງ ແລະ ປະຕິບັດການກະທຳຕ່າງໆ, ເສລີໃນການຕັດສິນໃຈ ຫຼື ໜ້າທີ່ອື່ນໆພາຍໃຕ້ຂໍ້ຕົກລົງທີ່ກ່ຽວຂ້ອງກັບການດຳເນີນງານ ຫຼື ໃຊ້ບັນຊີ ຫຼື ບໍລິການອື່ນໆ.

**ຜູ້ໃຊ້ SWIFT ທີ່ມີອຳນາດເຕັມໃຊ້ສິດ** ໝາຍເຖິງລູກຄ້າ ຫຼື ບຸກຄົນທີ່ຈົດທະບຽນກັບ SWIFT ແລະ ເປັນບຸກຄົນທີ່ຖືກຜູກມັດໃຫ້ເປັນພາກສ່ວນໜຶ່ງຂອງຂໍ້ຕົກລົງ SWIFT ຢ່າງຖືກຕ້ອງ ເຊິ່ງອະນຸຍາດໃຫ້ເຂົ້າເຖິງບໍລິການຂໍ້ຄວາມ SWIFT ແລະ ບັນລຸຕາມຄຸນນະສົມບັດທີ່ລະບຸໄວ້ ເພື່ອບໍ່ໃຫ້ເກີດຂໍ້ສົງໄສ ລູກຄ້າຈະສືບຕໍ່ເປັນຜູ້ໃຊ້ SWIFT ທີ່ມີອຳນາດເຕັມໃຊ້ສິດ ເຖິງຈະບໍ່ໄດ້ບັນລຸຕາມຂໍ້ຕົກລົງ SWIFT ທີ່ກ່ຽວຂ້ອງອີກຕໍ່ໄປ ໃນໄລຍະເວລາທີ່ລະບຸໄວ້ໃນຂໍ້ຕົກລົງ SWIFT ນອກຈາກໄລຍະເວລາທີ່ໃຫ້ກັບລູກຄ້າ ຫຼື ຜູ້ໃຊ້ SWIFT ທີ່ມີອຳນາດເຕັມໃຊ້ສິດຈະຕັດ ສິນໃຈໃຊ້ທາງເລືອກ ຕ່າງຫາກ.

**ຜູ້ໃຊ້ທີ່ມີອຳນາດເຕັມໃຊ້ສິດ** ໝາຍເຖິງບຸກຄົນທີ່ເປັນຜູ້ໃຊ້ ແລະ ໄດ້ຮັບອຳນາດໃນການໃຫ້ຄຳສັ່ງຜ່ານຊ່ອງທາງການທະນາຄານທາງອີເລັກໂຫຼນິກໃຫ້ກັບລູກຄ້າ ແລະ ເປັນບຸກຄົນທີ່ລູກຄ້າ ແຈ້ງການ ແລະ ຖືກພິຈາລະນາເຫັນດີໂດຍທະນາຄານ.

**ຜູ້ມີສິດອຳນາດ** ໝາຍເຖິງໜ່ວຍງານທີ່ກຳນົດກົດລະບຽບ, ບໍລິຫານ, ລັດຖະບານ, ເຄິ່ງລັດຖະບານ, ເໜືອລັດຖະບານ, ໜ່ວຍງານນຳໃຊ້ກົດໝາຍ ຫຼື ກວດສອບ, ສານ ຫຼື ກຳມະການຕັດສິນ.

**ທະນາຄານ** ໝາຍເຖິງ ANZ ຫລື ເປັນບ່ອນທີ່ມີການລົງທະບຽນບັນຊີ ແລະ ມີການສະໜອງບໍລິການໂດຍສະມາຊິກກຸ່ມ ທະນາຄານໃດໜຶ່ງ.

**ແອັບທະນາຄານ** ໝາຍເຖິງໂປແກຼມທີ່ທະນາຄານສະໜອງໃຫ້ ແລະ ປະຕິບັດງານຜ່ານເຄື່ອງມືໂທລະສັບ.

**ຜູ້ຈໍາໜ່າຍແອັບທະນາຄານ** ໝາຍເຖິງນິຕິບຸກຄົນທີ່ສະໜອງ ໃບອະນຸຍາດໃນການສົ່ງເສີມ ແລະ ຂາຍແອັບທະນາຄານ ຢູ່ໃນຮ້ານຄ້າແອັບຂອງນິຕິບຸກຄົນນັ້ນ.

**ແຊັກທະນາຄານ** ໝາຍເຖິງແຊັກທະນາຄານ ຫຼື ການສັ່ງຈ່າຍທີ່ຖືກຈັດຂຶ້ນຕ່າງໜ້າທະນາຄານໃຫ້ກັບລູກຄ້າ.

**ສະມາຊິກກຸ່ມທະນາຄານ** ໝາຍເຖິງ ANZ, ສາຂາ ແລະບຸກຄົນທັງໝົດທີ່ຖືກຄວບຄຸມໂດຍ ANZ ເຊິ່ງລວມທັງທຸກສາຂາ ແລະ ຕົວແທນທົ່ວໂລກ ຫຼື ຫ້ອງການປະຈໍາເຂດ.

**ບໍລິການຄໍາແນະນໍາຜູ້ຮັບຜົນປະໂຫຍດ** ໝາຍເຖິງບໍລິການທີ່ທະນາຄານຈັດຂຶ້ນເພື່ອແຈ້ງການຕ່າງໜ້າໃຫ້ກັບລູກຄ້າ, ຜູ້ຮັບການຊໍາລະສິນເຊື່ອ ຫຼື ການໂອນເງິນຂອງລູກຄ້າເຂົ້າສູ່ບັນຊີ.

**ວັນທໍາການ** ໝາຍເຖິງມື້ (ນອກຈາກມື້ພັກ ຫຼື ມື້ພັກລັດຖະການ ໃນປະເທດໃດໜຶ່ງເຊິ່ງມີການລົງທະບຽນບັນຊີທີ່ໃຊ້ໃນການຮັບ ຫຼື ໂອນເງິນ ໂດຍນໍາໃຊ້ສະກຸນເງິນຂອງປະເທດນັ້ນໆ) ທີ່ ທະນາຄານເປີດໃຫ້ດໍາເນີນການທຸລະກໍາໃນທຸລະກິດການທະນາຄານທົ່ວໄປ ເຊິ່ງຢູ່ໃນ (i) ປະເທດທີ່ບັນຊີຖືກສ້າງຂຶ້ນ, (ii) ບ່ອນທີ່ການປະສານງານຄໍາສັ່ງ ຫຼື ການສື່ສານເກີດຂຶ້ນ ໃນປະເທດທີ່ຄໍາສັ່ງ ຫຼື ການສື່ສານດັ່ງກ່າວເກີດຂຶ້ນ ແລະ (iii) ບ່ອນທີ່ມີການຮັບ ຫຼື ສົ່ງເງິນ ໂດຍໃຊ້ສະກຸນເງິນຂອງປະເທດນັ້ນໆ.

**ບໍລິການຈັດເກັບເງິນສົດ** ໝາຍເຖິງບໍລິການທີ່ທະນາຄານຈັດຂຶ້ນເພື່ອຈັດເກັບເງິນສົດຈາກສະຖານທີ່ຈັດເກັບ.

**ບໍລິການຈັດສົ່ງເງິນສົດ** ໝາຍເຖິງບໍລິການທີ່ທະນາຄານຈັດຂຶ້ນເພື່ອຖອນເງິນສົດອອກຈາກບັນຊີ ແລະ ຈັດສົ່ງໃນສະຖານທີ່ຈັດສົ່ງ.

**ຊ່ອງທາງ** ໝາຍເຖິງລະບົບ, ສື່ກາງ ຫຼື ຊ່ອງທາງບໍ່ວ່າຈະເປັນທາງອິນເຕີເນັດ ທີ່ທະນາຄານ ຫຼື ພາກສ່ວນທີສາມຈັດຂຶ້ນເປັນປະຈໍາເພື່ອເຮັດໃຫ້ລູກຄ້າທະນາຄານເຂົ້າເຖິງ ແລະ ໃຊ້ການທະນາຄານ ແລະ ບໍລິການອື່ນໆທີ່ທະນາຄານ ແລະ ລູກຄ້າເລືອກໃຊ້ (ໃນແບບຟອມລົງທະບຽນ) ຫຼື ຕາມທີ່ໄດ້ຕົກລົງກັບທະນາຄານ. ນອກຈາກຈະຕົກລົງກັນລະຫວ່າງ ທະນາຄານ ແລະລູກຄ້າໄວ້ຕ່າງຫາກ ຊ່ອງທາງທີ່ຄວນເລືອກ ໃນການເຂົ້າເຖິງບັນຊີ ຫຼື ການນໍາໃຊ້ບໍລິການ ຫຼື ການໃຫ້ຄໍາສັ່ງແມ່ນຊອງທາງການທະນາຄານອີເລັກໂຕຼນິກ, ການທະນາຄານ ໂດຍກົງ ແລະ ຂໍ້ຄວາມ SWIFT ໃນຂະນະທີ່ຊ່ອງທາງບໍ່ເລືອກ ລວມເຖິງໂທລະສັບ, ອີ-ເມວ, ໂທລະເລກ ແລະ ການສົ່ງ ໂທລະສານ.

**ບໍລິການຈັດເກັບແຊັກ** ໝາຍເຖິງບໍລິການທີ່ທະນາຄານຈັດຂຶ້ນ ເພື່ອຈັດເກັບເອກະສານທາງການຈາກສະຖານທີ່ຈັດເກັບ.

**ບໍລິການແຊັກພາຍນອກ** ໝາຍເຖິງບໍລິການໃດໜຶ່ງທີ່ທະນາຄານຈັດຂຶ້ນ:

(ກ) ການອອກແຊັກວິສາຫະກິດໃນນາມຂອງລູກຄ້າ;

(ຂ) ການອອກແຊັກທະນາຄານ;

(ຄ) ການອອກເອກະສານທາງການອື່ນໆ; ແລະ

ການຕີພິມ, ການຈັດການແຊກ, ຮູບແບບ, ການຈັດສົ່ງ, ການນໍາແຊັກເຂົ້າຈັດເກັບ, ການໄກ່ເກ່ຍໜີ້ຄ້າງຈ່າຍ ແລະການລາຍງານ ທີ່ກ່ຽວຂ້ອງກັບສິ່ງທີ່ກ່າວມາຂ້າງເທິງ ຫຼືບໍລິການ ຫຼື ກິດຈະກໍາອື່ນໆທີ່ກ່ຽວຂ້ອງກັບສິ່ງທີ່ກ່າວມາຂ້າງເທິງ ນອກຈາກບໍລິການທີ່ເປັນຮ່າງຂອງສະກຸນເງິນຕ່າງປະເທດ.

**ເງິນຊໍາລະໜີ້** ໝາຍເຖິງເງິນທີ່ຝາກໃນບັນຊີໃດໜຶ່ງເພື່ອທະນາຄານຈະສາມາດຮັບການຊໍາລະຈໍານວນເຕັມເຊິ່ງບໍ່ສາມາດໂອນຄືນ ຫຼື ຍົກເລີກ.

**ລູກຄ້າ** ໝາຍເຖິງບຸກຄົນ ຫຼື ການຈັດຕັ້ງທີ່ດໍາເນີນທຸລະກິດໃນນາມລູກຄ້າ.

**ສະຖານທີ່ຈັດເກັບ** ໝາຍເຖິງສະຖານທີ່ເງິນສົດ ຫຼືເອກະສານ ທາງການຖືກຈັດເກັບຕາມທີ່ຕົກລົງກັນລະຫວ່າງທະນາຄານ ແລະ ລູກຄ້າ.

**ເງື່ອນໄຂ** ໝາຍເຖິງເງື່ອນໄຂການທະນາຄານທົ່ວໄປຂອງ ANZ ຕາມທີ່ໄດ້ແກ້ໄຂ ແລະ ເພີ່ມເຕີມເປັນະຈໍາ.

**ການບໍລິການທີ່ເປັນຄວາມລັບ** ໝາຍເຖິງບໍລິການທີ່ທະນາຄານຈັດຂຶ້ນໃນການດໍາເນີນງານ ຫຼື ການນໍາໃຊ້ບັນຊີ ຫຼື ບໍລິການໃຫ້ກັບລູກຄ້າໂດຍເປັນຄວາມລັບ ແລະ ມີພຽງບຸກຄົນທີ່ມີອໍານາດໃຊ້ສິດເຕັມທີ່ເທົ່ານັ້ນທີ່ສາມາດດໍາເນີນງານ ຫຼື ນໍາໃຊ້ບັນຊີ ຫຼື ບໍລິການດັ່ງກ່າວ.

**ການຄວບຄຸມ** ໝາຍເຖິງ (ກ) ການຄອບຄອງ ທາງກົງແລະ ທາງອ້ອມ ຂອງມູນຄ່າຊັບສິນຫຼາຍກວ່າ 50%; ຫຼື (ຂ) ອໍານາດ ໃນທິດທາງການຈັດການ ແລະ ນະໂຍບາຍຂອງບຸກຄົນບໍ່ວ່າຈະຜ່ານການເປັນຂອງຜ່ານການອອກຄະແນນສຽງ ຫຼື ການສັນຍາ ຫຼື ອື່ນໆ.

**ແຊັກວິສາຫະກິດ** ໝາຍເຖິງແຊັກທີ່ທະນາຄານ ຫຼື ຜູ້ຮັບຜິດຊອບນໍາໃຊ້ໃນນາມ ແລະ ຕ່າງໜ້າໃຫ້ກັບລູກຄ້າ.

**ຜູ້ຮັບຜິດຊອບ** ໝາຍເຖິງສະຖາບັນການເງິນທີ່ທະນາຄານນໍາໃຊ້ ໃນການຊໍາລະທາງກົງ ແລະ ທາງອ້ອມໃຫ້ກັບຜູ້ຮັບ ຫຼື ດໍາເນີນ ບໍລິການທີ່ກ່ຽວຂ້ອງກັບບັນຊີ ແລະ ລວມທັງຜູ້ຮັບຜິດຊອບຄົນກາງ.

**ການປະສານງານ** ໝາຍເຖິງການໃຫ້ຄໍາແນະນໍາ, ການຮຽກເກັບໜີ້ ແລະ ເອກະສານອື່ນໆ (ຕາມທີ່ຕົກລົງກັນລະຫວ່າງ ANZ ແລະ ລູກຄ້າ).

**ຄ່າໃຊ້ຈ່າຍ** ໝາຍເຖິງຄ່າໃຊ້ຈ່າຍ, ຄ່າທໍານຽມ ແລະລາຍຈ່າຍອື່ນໆ ລວມທັງສິ່ງທີ່ກ່ຽວຂ້ອງກັບທີ່ປຶກສາ ແລະຄ່າໃຊ້ຈ່າຍຕາມກົດໝາຍອື່ນໆ.

**ແຜນການພາກສ່ວນຄວບຄູ່** ໝາຍເຖິງເງື່ອນສະເພາະຂອງລູກຄ້າ ທີ່ໃຊ້ບັນຊີປະເພດນິຕິບຸກຄົນຂອງລູກຄ້າ.

**ແຜນການປະເທດ** ໝາຍເຖິງເງື່ອນໄຂສະເພາະຂອງປະເທດທີ່ໃຊ້ບັນຊີ ຫຼື ບໍລິການຕາມທີ່ໄດ້ບັນທຶກໃນແຜນການປະເທດ.

**ຂໍ້ມູນປະຈໍາຕົວ** ໝາຍເຖິງຕົວບົ່ງຊີ້ ຫຼື ອຸປະກອນຄວາມປອດໄພ ຫຼື ຂະບວນການກໍານົດຄວາມປອດໄພທີ່ກ່ຽວຂ້ອງກັບການເຂົ້າ ເຖິງຊ່ອງທາງການທະນາຄານຂອງລູກຄ້າ ເຊິ່ງລວມທັງໃບຢັ້ງຢືນ ອີເລັກໂຕຼນິກ, ຕົວບົ່ງຊີ້ສະເພາະ, ຊື່ຜູ້ໃຊ້ ແລະ ລະຫັດຜ່ານ, ລາຍເຊັນອີເລັກໂຕຼນິກ ຫຼື ຂໍ້ມູນຄວາມປອດໄພອື່ນໆ ຫຼື ຂະບວນການຕາມທີ່ຕົກລົງກັນລະຫວ່າງທະນາຄານ ແລະ ລູກຄ້າເປັນປະຈໍາ

ເຊິ່ງລະບຸໃຫ້ຜູ້ໃຊ້ຂອງຊ່ອງທາງ ການທະນາຄານອີເລັກໂຕຼນິກເປັນ ຜູ້ໃຊ້. ຂໍ້ມູນ ປະຈຳຕົວທີ່ຖືກຕ້ອງໝາຍ ເຖິງຂໍ້ມູນປະຈຳຕົວທີ່ອອກ ໃຫ້ກັບລູກຄ້າ (ຫຼືຄັດເລືອກໂດຍລູກຄ້າ) ເພື່ອນຳໃຊ້ ໃນຊ່ອງທາງການທະນາຄານອີເລັກໂຕຼນິກ ແລະ ແຈ້ງການໃຫ້ກັບທະນາຄານຍິນຍອມ.

**ລູກຄ້າ** ໝາຍເຖິງຜູ້ລົງທະບຽນໃນແບບຟອມລົງສະໝັກ.

**ຂໍ້ມູນຂອງລູກຄ້າ** ໝາຍເຖິງຂໍ້ມູນທີ່ບໍ່ໄດ້ຈັດຂຶ້ນຢ່າງເປີດເຜີຍແລະ ລະບຸເປັນລາຍບຸກຄົນຢ່າງສົມເຫດສົມຜົນ.

**ເວລາສິ້ນສຸກການທຳທຸລະກຳ** ໝາຍເຖິງເວລາລ້າສຸດທີ່ທະນາຄານຈະຮັບຄຳສັ່ງຈາກລູກຄ້າ.

**ຕາຕະລາງຄຳນິຍາມ** ໝາຍເຖິງຄຳນິຍາມ ແລະ ຂໍ້ກຳນົດທີ່ຈັດຕັ້ງຂຶ້ນໃນຕາຕະລາງຄຳນິຍາມສະບັບນີ້ ແລະ ຕາມສະພາບການທີ່ຈຳເປັນ.

**ກ່ອງຈັດສົ່ງ** ໝາຍເຖິງກ່ອງໄປສະນີ ຫຼື ກະເປົາລັອກ ຫຼື ອີ-ເມວທີ່ ກຳນົດ ຫຼື ໂທລະສານທີ່ລູກຄ້າຈັດຂຶ້ນໂດຍມີຈຸດປະສົງຮັບເອົາ ຂ່າວສານ.

**ສະຖານທີ່ຈັດສົ່ງ** ໝາຍເຖິງສະຖານທີ່ຈັດສົ່ງເງິນສົດຕາມທີ່ລະບຸໄວ້ໂດຍລູກຄ້າ ໃນບໍລິການຈັດສົ່ງເງິນສົດ.

**ໃບຢັ້ງຢືນອີເລັກໂຕຼນິກ** ໝາຍເຖິງໃບຢັ້ງຢືນອີເລັກໂຕຼນິກທີ່ປະກອບຢູ່ໃນເຄື່ອງມືຂອງຜູ້ສົ່ງ, ຢືນຢືນຄຳສັ່ງ ແລະ ປະເມີນຂໍ້ມູນໃຫ້ເປັນຄວາມລັບ ແລະ ບໍ່ຖືກລົບກວນໃນເວລາທີ່ສົ່ງຂໍ້ຄວາມ.

**ຄຳແນະນຳໜີ້ໂດຍກົງ** ໝາຍເຖິງຜູ້ທີ່ມີອຳນາດຈາກສ່ວນຂອງລູກຄ້າຕໍ່ທະນາຄານ ຫຼື ບຸກຄົນທີສາມເພື່ອໂອນເງິນທາງອີເລັກໂຕຼນິກຈາກບັນຊີ.

**ບໍລິການຈັດການໜີ້ໂດຍກົງ**ໝາຍເຖິງບໍລິການທີ່ທະນາຄານຈັດຂຶ້ນເພື່ອປະສານງານຄຳສັ່ງ ແລະ ການຊຳລະຕ່າງໜ້າລູກຄ້າ.

**ບໍລິການໜີ້ໂດຍກົງໝາຍ** ເຖິງບໍລິການທີ່ທະນາຄານຈັດຂຶ້ນ ເພື່ອໂອນເງິນທາງອີເລັກໂຕຼນິກຈາກຜູ້ຈ່າຍຫາລູກຄ້າ.

**ຊ່ອງທາງການທະນາຄານອີເລັກໂຕຼນິກ** ໝາຍເຖິງຊ່ອງທາງອິນເຕີເນັດ ຫຼື ອອນລາຍ ຫຼື ຊ່ອງທາງທີ່ໃກ້ຄຽງກັນ (ລວມເຖິງ ຜູ້ຈັດຫາຜູ້ຈັດ) ທີ່ຖືກຈັດຕັ້ງຂຶ້ນໂດຍທະນາຄານ ຫຼື ບຸກຄົນທີສາມ ເຊິ່ງເຮັດໃຫ້ລູກຄ້າເຂົ້າເຖິງບັນຊີ, ນຳໃຊ້ບໍລິການ ແລະ ໃຫ້ຄຳສັ່ງ.

**ຕາຕະລາງຄ່າທຳນຽມ** ໝາຍເຖິງຕາຕະລາງຄ່າທຳນຽມໃນຮູບແບບຂອງຈົດໝາຍທີ່ກ່ຽວຂ້ອງກັບຄ່າທຳນຽມໃນການເປີດບັນຊີ, ການດຳເນີນງານ ແລະ ການຮັກສາບັນຊີ ຫຼື ບໍລິການອື່ນໆ.

**ເຫດການສຸດວິໄສ** ໝາຍເຖິງເຫດການທີ່ນອກເໜືອການຄວບຄຸມຂອງທະນາຄານ ລວມທັງ:

(ກ) ໄຟໄໝ້, ນ້ຳຖ້ວມ, ແຜ່ນດິນໄຫວ, ພາຍຸ ຫຼື ເຫດການທາງທຳມະຊາດອື່ນໆ;

(ຂ) ການໂຈມຕີ ຫຼື ການຂັດແຍ້ງແຮງງານ;

(ຄ) ສົງຄາມ, ການຕໍ່ຕ້ານ, ເຫດການກໍ່ການຮ້າຍ ຫຼື ການປະທ້ວງ;

(ງ) ຄວາມຜິດພາດຂອງຜູ້ທີ່ມີອຳນາດ;

(ຈ) ການປ່ຽນແປງກົດໝາຍ ຫຼື ຄຳສັ່ງຂອງຜູ້ທີ່ມີອຳນາດ;

(ສ) ຄວາມລົ້ມເຫຼວ, ການທຳລາຍຄວາມສະຫງົບ ຫຼື ຄວາມຜິດພາດໃນການແຊກແຊງຂອງໂທລະຄົມ, ກະແສໄຟຟ້າ ຫຼື ເຄື່ອງອຳນວຍຄວາມສະດວກອື່ນໆ;

(ຊ) ຄວາມລົ້ມເຫຼວທາງເຕັກນິກ, ການທຳລາຍຄວາມສະຫງົບ ຫຼື ການແຊກແຊງລະບົບຄອມພິວເຕີ ຫຼື ອຸປະກອນ ຫຼື ຊ່ອງທາງ (ທີ່ເກີດຈາກອຸປະກອນ ຫຼື ໂປຼແກຼມ); ແລະ

(ຍ) ຄວາມລົ້ມເຫຼວ, ການທຳລາຍຄວາມສະຫງົບ ຫຼື ການແຊກແຊງຂອງບໍລິການທີ່ທະນາຄານ ຫຼື ບຸກຄົນທີສາມ ຫຼື ລະບົບບຸກຄົນທີສາມຈັດຂຶ້ນ.

**ບັນຊີສະກຸນເງິນຕາຕ່າງປະເທດ** ໝາຍເຖິງບັນຊີທີ່ກຳນົດສຳລັບສະກຸນເງິນທີ່ບໍ່ແມ່ນສະກຸນເງິນຂອງປະເທດທີ່ບັນຊີຈົດທະບຽນ.

**ອຳນາດການປົກຄອງ** ໝາຍເຖິງອຳນາດການປົກຄອງທີ່ສະມາຊິກກຸ່ມທະນາຄານທີ່ຈັດການບັນຊີ ຫຼື ບໍລິການຕັ້ງຢູ່ (ຫຼື ຖ້າບັນຊີ ຫຼື ການບໍລິການທີ່ເກີດຂຶ້ນທີ່ສາຂາຂອງທະນາຄານ ແມ່ນສະຖານ ທີ່ຂອງສາຂາ) ຫຼື ອຳນາດທີ່ຕົກລົງເປັນລາຍລັກອັກສອນລະຫວ່າງ ທະນາຄານ ແລະ ລູກຄ້າ.

**ເງິນຮັບຮອງ** ໝາຍເຖິງຍອດສົມດຸນໃນເບື້ອງໜີ້ທີ່ມີລັກສະນະລວມທັງສະກຸນເງິນ ທີ່ກຳນົດໃນບັນຊີຄິດໄລ່ດອກເບ້ຍຕາມ ການລວມຂອງຍອດສົມດຸນ ແລະ ໜີ້ສິນທາງການເງິນອື່ນໆ ຂອງຜູ້ເຂົ້າຮ່ວມຄິດໄລ່ດອກເບ້ຍຕາມການລວມຂອງຍອດສົມດຸນໃຫ້ກັບທະນາຄານພາຍໃຕ້ບັນຊີຄິດໄລ່ດອກເບ້ຍຕາມການລວມຂອງຍອດສົມດຸນໂດຍບໍ່ກ່ຽວຂ້ອງກັບຍອດສົມດຸນ ເບື້ອງໜີ້ ຫຼື ໜີ້ສິນການເງິນໃນປັດຈຸບັນ ແລະ ອະນາຄົດ; ເຊິ່ງ ເປັນຄວາມຈິງ, ຄາດຫວັງ, ບໍ່ແນ່ນອນ ຫຼື ອື່ນໆ; ມີລັກສະນະ ຊັດເຈນ ຫຼື ບໍ່ຊັດເຈນ; ຫຼືປະກອບມີການລວມຕົວຂອງສິ່ງທີ່ກ່າວມາຂ້າງເທິງ.

**ໂຮດ-ທູ- ໂຮດ** ໝາຍເຖິງລະບົບການສື່ສານໂຮດ-ທູ- ໂຮດຜ່ານອີເລັກໂຕຼນິກ ເຊິ່ງມີເປົ້າໝາຍໃນການອຳນວຍຄວາມສະດວກໃຫ້ກັບຄວາມໝັ້ນຄົງ ແລະ ຄວາມປອດໄພຂອງການສື່ສານ (ລວມທັງຄຳສັ່ງ) ທີ່ສົ່ງຜ່ານຈາກລູກຄ້າໃຫ້ທະນາຄານ ຫຼື ຈາກທະນາຄານຫາລູກຄ້າ.

**ບໍລິການໂຮດ-ທູ- ໂຮດ**ໝາຍເຖິງການບໍລິການທີ່ທະນາຄານກຳນົດໃຫ້ກັບລູກຄ້າເພື່ອເຂົ້າເຖິງໂຮດ-ທູ- ໂຮດ.

**ຄວາມເສຍຫາຍທາງອ້ອມ** ໝາຍເຖິງຄວາມເສຍຫາຍທີ່ທາງອ້ອມ ຫຼື ເປັນຜົນມາຈາກການສູນເສຍຜົນປະໂຫຍດ ຫຼື ການເກັບເງິນ ລ່ວງໜ້າ, ການສູນເສຍໂອກາດທາງທຸລະກິດ, ການສູນເສຍຊື່ສຽງ, ການລົບກວນທາງທຸລະກິດ, ການເຂົ້າເຖິງຂໍ້ມູນທີ່ບໍ່ໄດ້ຮັບອະນຸຍາດ ຫຼື ການສູນເສຍຂໍ້ມູນ, ການສູນເສຍທາງເສດຖະກິດ ຫຼື ການສູນເສຍພິເສດ, ທາງອ້ອມ ຫຼື ເປັນຜົນມາຈາກສິ່ງອື່ນ ແລະ ລວມທັງຄ່າໃຊ້ຈ່າຍທີ່ເກີດຂຶ້ນກັບທາງໃດທາງໜຶ່ງ.

**ຂໍ້ມູນ** ໝາຍເຖິງເນື້ອຫາຂອງຂໍ້ຄວາມ SWIFT ທີ່ສົ່ງຈາກທະນາຄານຫາລູກຄ້າ.

**ບໍລິການອິນສະຕາເຄດິດ** ໝາຍເຖິງບໍລິການທີ່ທະນາຄານຈັດຂຶ້ນໃຫ້ກັບລູກຄ້າໂດຍທະນາຄານຝາກເງິນເຂົ້າບັນຊີໃນຈຳນວນເຕັມ ຫຼື ບາງສ່ວນ ເຊິ່ງຄາດການໄດ້ຮັບໂດຍທະນາຄານເພື່ອເປັນບັນຊີຂອງລູກຄ້າກ່ອນທີ່ທະນາຄານຈະໄດ້ຮັບເງິນເຫຼົ່ານັ້ນເປັນຈຳນວນເຕັມ.

**ຄຳສັ່ງ** ໝາຍເຖິງການສະເໜີ ແລະ ຄຳສັ່ງທັງໝົດ (ລວມທັງຄຳສັ່ງທີ່ກຳນົດອອກ) ທີ່ກ່ຽວຂ້ອງກັບບັນຊີ ຫຼື ບໍລິການໂດຍລູກຄ້າ (ຫຼືຕົວແທນ) ແລະ ຮັບໂດຍທະນາຄານຜ່ານຊ່ອງທາງ ໃດໜຶ່ງ (ອາດຈະເປັນ ທີ່ເລືອກ ຫຼື ບໍ່ເລືອກ) ຫຼື ຊ່ອງທາງອື່ນໆ ຕາມທີ່ຕົກລົງ ກັນລະຫວ່າງທະນາຄານ ແລະ ລູກຄ້າ ແລະ "ຄຳສັ່ງ"ໝາຍເຖິງສິ່ງທີ່ມີລັກສະນະດຽວກັນກັບສິ່ງທີ່ກ່າວມາ.

**ເອກະສານທາງການ** ໝາຍເຖິງແຊັກ (ລວມທັງ PDC), ແຊັກທະນາຄານ, ຮ່າງຄວາມຕ້ອງການ, ການສັ່ງຈ່າຍ ແລະ ເອກະສານທາງການອື່ນໆທີ່ມີລັກສະນະຄ້າຍຄືກັນ.

**ບັນຊີດອກເບ້ຍສູງສຸດ** ໝາຍເຖິງບັນຊີທີ່ລະບຸໄວ້ດັ່ງໃນແບບຟອມລົງທະບຽນທີ່ກ່ຽວຂ້ອງ.

**ຜູ້ເຂົ້າຮ່ວມດອກເບ້ຍສູງສຸດ**ໝາຍເຖິງຜູ້ເຂົ້າຮ່ວມທີ່ເຂົ້າຮ່ວມ ໃນບໍລິການດອກເບ້ຍສູງສຸດ.

**ບໍລິການດອກເບ້ຍສູງສຸດ** ໝາຍເຖິງບໍລິການທີ່ທະນາຄານຈັດຂຶ້ນໂດຍທີ່ທະນາຄານຈັດອັດຕາດອກເບ້ຍໃຫ້ກັບຜູ້ເຂົ້າຮ່ວມດອກເບ້ຍສູງສຸດໂດຍອີງໃສ່ຍອດສົມດູນເບື້ອງມີ ຫຼື ໜີ້ທັງໝົດ (ຕາມທີ່ຕົກລົງ) ໃນບັນຊີດອກເບ້ຍສູງສຸດ.

**ການຊຳລະສາກົນ** ໝາຍເຖິງ (i) ການຊຳລະຈາກບັນຊີໜຶ່ງເຂົ້າຫາ ອີກບັນຊີໜຶ່ງໃນປະເທດທີ່ແຕກຕ່າງຈາກປະເທດທີ່ບັນຊີລົງທະບຽນນຳ (ii) ການຊຳລະທີ່ເກີດຂຶ້ນໃນສະກຸນເງິນຕ່າງປະເທດ ເຊິ່ງບໍ່ແມ່ນສະກຸນເງິນຂອງປະເທດທີ່ບັນຊີລົງທະບຽນນຳ ໂດຍທີ່ບັນຊີດັ່ງກ່າວມີສະກຸນເງິນທີ່ບໍ່ສະໜັບສະໜູນໃນການຊຳລະໜີ້ໃນລະດັບທ້ອງຖິ່ນ.

**ເອກະສານທາງການທີ່ບໍ່ຖືກຕ້ອງ** ໝາຍເຖິງເອກະສານທາງການທີ່ລະບຸໃຫ້ບໍ່ຖືກຕ້ອງຕາມທີ່ໄດ້ກຳນົດໂດຍທະນາຄານຍ້ອນເຫດຜົນໃດໜຶ່ງ ລວມທັງເຫດຜົນເຊັ່ນຄວາມເສຍຫາຍຂອງເອກະສານທາງການ(ລວມທັງຄວາມຊຳລຸດຊຸດໂຊມ), ການດຳເນີນຕາມເອກະສານທີ່ບໍ່ຖືກຕ້ອງ, ເອກະສານເລີ່ມລ້າສະໄໝ, ລູກຄ້າບໍ່ມີສິດພຽງພໍໃນການເຂົ້າເຖິງເອກະສານ, ບໍ່ມີເງິນພຽງພໍສຳລັບການກຳຈັດເອກະສານ ຫຼື ການຍົກເລີກຊຳລະຂອງເອກະສານທາງການ.

**ກົດໝາຍ** ໝາຍເຖິງສົນທິສັນຍາ, ກົດໝາຍ, ຂໍ້ບັງຄັບ, ກົດລະບຽບ, ກຳນົດການ, ຄຳສັ່ງສານ ຫຼື ມາດຕະຖານຂອງຜູ້ມີອຳນາດອື່ນໆ ຫຼື ການສະເໜີ, ຄຳສັ່ງ, ທິດທາງ, ຄຳແນະນຳ, ການແຈ້ງການ, ກົດເກນ, ການຕັດສິນໃຈ ຫຼື ຄຳຊີ້ແຈງຂອງນະໂຍບາຍ ຫຼື ການປະພຶດຂອງຜູ້ມີອຳນາດທີ່ມີອຳນາດບັງຄັບນຳໃຊ້ກົດໝາຍ ຫຼື ຖ້າບໍ່ມີຜູ້ບັງຄັບນຳໃຊ້ກົດໝາຍກໍໃຫ້ສອດຄ່ອງກັບເຂດປົກຄອງທີ່ກ່ຽວຂ້ອງ.

**ບໍລິການສະພາບຄ່ອງ** ໝາຍເຖິງບໍລິການສະວີບ, ບໍລິການດອກເບ້ຍສູງສຸດ ແລະ ບໍລິການຄິດໄລ່ດອກເບ້ຍຕາມການລວມຂອງຍອດສົມດຸນ.

**ສະຖານທີ່ໄປສະນີ** ໝາຍເຖິງສະຖານທີ່ກຳນົດທີ່ທະນາຄານ ຫຼື ສະຖານທີ່ອື່ນໆ (ລວມທັງຜູ້ຮັບຜິດຊອບ) ຕາມທີ່ຕົກລົງກັນ ລະຫວ່າງລູກຄ້າ ແລະ ທະນາຄານເພື່ອຈັດເກັບ ແລະ ຮັກສາ ເອກະສານທາງການໃດໜຶ່ງ (ຈົນກວ່າຈະຮອດກຳນົດດຳເນີນງານ) ທີ່ຜູ້ຈ່າຍຝາກຕ່າງໜ້າໃຫ້ກັບລູກຄ້າ.

**ບໍລິການໄປສະນາ** ໝາຍເຖິງບໍລິການທີ່ທະນາຄານຈັດຂຶ້ນໂດຍ ທີ່ທະນາຄານຈັດກຽມສິ່ງອຳນວຍຄວາມສະດວກໃຫ້ກັບລູກຄ້າເພື່ອໃຫ້ມີເອກະສານທາງການທີ່ຝາກໃນສະຖານທີ່ໄປສະນີ ຫຼື ຄຳສັ່ງການຈ່າຍທາງອີເລັກໂຕຼນິກ ເພື່ອຈະສາມາດຈັດເກັບ ແລະ ດຳເນີນການໂດຍທະນາຄານ ເຊິ່ງລວມທັງບໍລິການ ຈັດເກັບແຊັກ ແລະ ບໍລິການສຳລັບແຊັກຊຳລະ ແລະ ດຳເນີນການ, ການເກັບກຳຂໍ້ມູນ, ການໄກ່ເກ່ຍໃບຮຽກເກັບໜີ້ ແລະ ການສະໜອງບົດລາຍງານເພື່ອໄກ່ເກ່ຍ.

**ຄວາມເສຍຫາຍ** ໝາຍເຖິງຄວາມເສຍຫາຍ, ການສູນເສຍ, ໜີ້ສິນ, ຄ່າໃຊ້ຈ່າຍ, ການລ້າຊ້າ ຫຼື ການຫຼຸດຂອງມູນຄ່າ.

**ບໍລິການ MACUG** ໝາຍເຖິງສະພາບແວດລ້ອມຂອງກຸ່ມຜູ້ໃຊ້ປິດທີ່ບໍລິຫານໂດຍສະມາຊິກຂອງ SWIFT ເຊິ່ງມີຈັດການ ໂດຍທະນາຄານ ແລະ ຕິດຕັ້ງຂຶ້ນລະຫວ່າງລູກຄ້າ, ທະນາຄານ ແລະ ຜູ້ໃຊ້ SWIFT ທີ່ມີອຳນາດໃຊ້ສິດອື່ນໆ.

**ຄຳສັ່ງ** ໝາຍເຖິງອຳນາດຈາກບຸກຄົນທີສາມ (ເຊິ່ງອາດເປັນລູກຄ້າຂອງລູກຄ້າ) ຕໍ່ທະນາຄານເພື່ອໂອນເງິນທາງອີເລັກ ໂຕຼນິກຈາກບັນຊີຂອງບຸກຄົນທີສາມໃຫ້ກັບລູກຄ້າ.

**ອຸປະກອນມືຖື** ໝາຍເຖິງອຸປະກອນທີ່ລະບຸໄວ້ໃນຂໍ້ຕົກລົງທີ່ກ່ຽວຂ້ອງໃນແອັບທະນາຄານ.

**ບັນຊີຄິດໄລ່ດອກເບ້ຍຕາມການລວມຂອງຍອດສົມດຸນ** ໝາຍເຖິງບັນຊີທີ່ລະບຸໄວ້ດັ່ງນັ້ນໃນແບບຟອມລົງທະບຽນ.

**ຜູ້ເຂົ້າຮ່ວມຄິດໄລ່ດອກເບ້ຍຕາມການລວມຂອງຍອດສົມດຸນ** ໝາຍເຖິງຜູ້ເຂົ້າຮ່ວມບໍລິການເງິນກອງກາງຄາດຄະເນຕາມທີ່ໄດ້ລະບຸໃນແບບຟອມລົງທະບຽນທີ່ກ່ຽວຂ້ອງ.

**ການບໍລິການຄິດໄລ່ດອກເບ້ຍຕາມການລວມຂອງຍອດສົມດຸນ** ບໍລິການຄິດໄລ່ດອກເບ້ຍຕາມການລວມຂອງຍອດສົມດຸນ ໝາຍເຖິງບໍລິການທີ່ທະນາຄານຈັດຂຶ້ນໂດຍຍອດສົມດຸນ ຂອງບັນຊີຄິດໄລ່ດອກເບ້ຍຕາມການລວມຂອງຍອດ ສົມດຸນຂອງຜູ້ເຂົ້າຮ່ວມ ຕາມທີ່ໄດ້ສະກຸນເງິນທີ່ໄດ້ກຳນົດ ແລະ ຍອມຮັບເພື່ອຈຸດປະສົງໃນການຄຳນວນດອກເບ້ຍ. ເພື່ອຫຼີກລ້ຽງ ຂໍ້ສົງໄສ ເງິນຈະບໍ່ສາມາດຖ່າຍໂອນຈາກບັນຊີຄິດໄລ່ດອກເບ້ຍ ຕາມການລວມຂອງຍອດສົມດຸນຫາອີກບັນຊີໜຶ່ງ.

**ການທະນາຄານ OTC** ໝາຍເຖິງການທະນາຄານໂດຍກົງໃນສາຂາຂອງທະນາຄານ.

**ຜູ້ເຂົ້າຮ່ວມ** ໝາຍເຖິງຜູ້ເຂົ້າຮ່ວມເງິນກອງກາງຄາດຄະເນ, ຜູ້ເຂົ້າຮ່ວມສະວີບ ຫຼື ຜູ້ເຂົ້າຮ່ວມດອກເບ້ຍສູງສຸດ.

**PDC** ໝາຍເຖິງແຊັກກ່ອນກຳນົດ.

**ລາຍຊື່ PDC** ໝາຍເຖິງລາຍຊື່ທີ່ປະກອບມີຂໍ້ມູນດັ່ງລຸ່ມນີ້:

(ກ) ເລກແຊັກ ແລະ ວັນທີຂອງ PDC;

(ຂ) ຜູ້ຖອນແຊັກ; ແລະ

(ຄ) ຈຳນວນຂອງ PDCs.

**ຂໍ້ມູນສ່ວນຕົວ** ໝາຍເຖິງຂໍ້ມູນ ຫຼື ຄວາມຄິດເຫັນກ່ຽວກັບບຸກຄົນທີ່ສາມາດລະບຸໄດ້ຢ່າງສົມເຫດສົມຜົນ.

**ບໍລິການແຊັກກ່ອນກຳນົດ** ໝາຍເຖິງບໍລິການທີ່ທະນາຄານຈັດຂຶ້ນເພື່ອຈັດເກັບ ແລະ ຈັດການ PDCs.

**ເຫດການຍົກເລີກທີ່ສາມາດເປັນໄປໄດ້** ໝາຍເຖິງເຫດການທີ່ມີ ການແຈ້ງການລ່ວງໜ້າທີ່ສາມາດປະກອບເປັນເຫດການຍົກເລີກ.

**ການຊື້ ຫຼື ບໍລິການສ່ວນຫຼຸດ** ໝາຍເຖິງບໍລິການທີ່ທະນາຄານຈັດຂຶ້ນເພື່ອຝາກເງິນເຂົ້າບັນຊີລູກຄ້າ ເປັນຈຳນວນເຕັມ ຫຼື ບາງສ່ວນຂອງຈຳນວນນັ້ນ ຂອງເອກະສານທາງການ ແລະ ໜີ້ຄ້າງຮັບຂອງລູກຄ້າກ່ອນການຊຳລະໜີ້ ຫຼື ວັນທີທີ່ກຳນົດ.

**ບໍລິການລາຍງານ** ໝາຍເຖິງບໍລິການທີ່ທະນາຄານຈັດຂຶ້ນ ເພື່ອຈັດເກັບ ແລະ ສົ່ງຍອດສົມດຸນ ແລະ ການສົ່ງຖ່າຍຂໍ້ມູນ ທີ່ກ່ຽວຂ້ອງກັບບັນຊີ ຫຼື ບັນຊີອື່ນໆ ຂອງລູກຄ້າກັບບຸກຄົນທີສາມ ແລະ ການລາຍງານຂໍ້ມູນດັ່ງກ່າວໃຫ້ກັບລູກຄ້າ.

**ການອະນຸຍາດຢ່າງເປັນທາງການ** ໝາຍເຖິງການອະນຸຍາດທາງເສດຖະກິດ ຫຼື ການຄ້າທີ່ຜູ້ມີອຳນາດກຳນົດໃຊ້.

**SCORE** ໝາຍເຖິງ ສະພາບແວດລ້ອມບໍລິການມາດຕະຖານ ວິສາຫະກິດທີ່ຈັດຂຶ້ນ ແລະ ຈັດການໂດຍ SWIFT.

**ສິ່ງຄໍ້າປະກັນ** ໝາຍເຖິງສັນຍາຢືມເງິນຊື້ເຮືອນ, ສິດໃນການ ຄອບຄອງ, ຄ່າທຳນຽມ ຫຼື ສິ່ງຄໍ້າປະກັນອື່ນໆທີ່ມີຜົນແບບດຽວກັນ.

**ອຸປະກອນຄວາມປອດໄພ** ໝາຍເຖິງເຄື່ອງໝາຍຄວາມປອດໄພ, ລຸກກະແຈອີເລັກໂທຼນິກ ຫຼື ອຸປະກອນທີ່ຄ້າຍຄືກັນ.

**ບໍລິການ** ໝາຍເຖິງຜະລິດຕະພັນການເງິນ, ບໍລິການ, ບັນຊີ, ຊ່ອງທາງການທະນາຄານອີເລັກໂທຼນິກ, ສິ່ງອຳນວຍຄວາມ ສະດວກ, ເງິນກູ້, ເງິນກູ້ເບີກເກີນບັນຊີ, ການຂະຫຍາຍສິນເຊື່ອ ຫຼື ຜະລິດຕະພັນອື່ນໆ, ຄວາມຊ່ວຍເຫຼືອ ຫຼື ການສະໜັບສະໜູນ ທີ່ທະນາຄານຈັດຂຶ້ນໃຫ້ກັບລູກຄ້າ ເຊິ່ງຫຼາຍກວ່າສິ່ງອຳນວຍ ຄວາມສະດວກ, ເງິນກູ້, ເງິນກູ້ເບີກເກີນບັນຊີ ຫຼື ການຂະຫຍາຍ ສິນເຊື່ອທີ່ຕົກລົງກັນເປັນລາຍລັກອັກສອນລະຫວ່າງທະນາຄານ ແລະ ລູກຄ້າ.

**ຜູ້ຮ່ວມມືບໍລິການ** ໝາຍເຖິງບຸກຄົນທີ່ທະນາຄານຄັດເລືອກເປັນປະຈຳເພື່ອຮັບການສື່ສານ (ລວມທັງຄຳສັ່ງ) ທີ່ສົ່ງໂດຍລູກຄ້າ ຜ່ານລະບົບໂຮດ-ທູ-ໂຮດ ເພື່ອການດຳເນີນການ ແລະ ການ ສົ່ງຜ່ານທະນາຄານ.

**ຕາຕະລາງບໍລິການ** ໝາຍເຖິງເງື່ອນໄຂສະເພາະທີ່ລະບຸໄວ້ເຖິງບໍລິການຕາມທີ່ໄດ້ບັນທຶກໄວ້ໃນຕາຕະລາງບໍລິການສະເພາະ ຫຼື ສະພາບການທີ່ຈຳເປັນ.

**ບັນຊີສະວີບ** ໝາຍເຖິງບັນຊີທີ່ລະບຸເປັນແບບນັ້ນໃນແບບຟອມລົງທະບຽນທີ່ກ່ຽວຂ້ອງ.

**ຜູ້ເຂົ້າຮ່ວມສະວີບ** ໝາຍເຖິງຜູ້ເຂົ້າຮ່ວມທີ່ມີບັນຊີເຂົ້າຮ່ວມໃນ ບໍລິການສະວີບຕາມທີ່ໄດ້ລະບຸໄວ້ໃນແບບຟອມລົງທະບຽນທີ່ກ່ຽວຂ້ອງ.

**ບໍລິການສະວີບ** ໝາຍເຖິງບໍລິການທີ່ທະນາຄານຈັດຂຶ້ນເຊິ່ງລວມ ກັບການເຄື່ອນໄຫວຂອງເງິນໃນບັນຊີສະວີບຂອງຜູ້ເຂົ້າ ຮ່ວມສະວີບ ເຊິ່ງອາດຈັດຕັ້ງຢູ່ໃນເຂດອຳນາດທີ່ຄ້າຍຄື ຫຼື ແຕກຕ່າງກັນໃນແບບຟອມລົງທະບຽນ.

**ໃບຢັ້ງຢືນອີເລັກໂທຼນິກສຳລັບຜູ້ຕິດຕາມ** ໝາຍເຖິງໃບຢັ້ງຢືນອີເລັກໂທຼນິກທີ່ກຳນົດໃຫ້ບຸກຄົນ ແລະ ຝັງຢູ່ໃນອຸປະກອນ ຄວາມປອດໄພ ເຊັ່ນ ສະມາດກາດ ຫຼື USB.

**SWIFT** ໝາຍເຖິງ S.W.I.F.T. SCRL ບໍລິສັດຈຳກັດໜີ້ສິນໃນຖະໜົນອາເດວ 1, B-1310- ລາຍຮັບ, ປະເທດແບນຊິກ.

**ຂໍ້ຕົກລົງ SWIFT** ໝາຍເຖິງຂໍ້ຕົກລົງໃດໜຶ່ງທີ່ສ້າງຂຶ້ນລະຫວ່າງ SWIFT ແລະ ລູກຄ້າ (ຫຼື ຜູ້ໃຊ້ SWIFT ທີ່ມີອຳນາດເຕັມໃຊ້ສິດ) ຫຼື ທະນາຄານ ເຊິ່ງກ່ຽວຂ້ອງກັບການນຳໃຊ້ບໍລິການຂໍ້ຄວາມຂອງ SWIFT.

**ເອກະສານ SWIFT** ໝາຍເຖິງຂໍ້ກຳນົດ, ເງື່ອນໄຂ, ກົດລະບຽບ, ນະໂຍບາຍ, ຄູ່ມືແນະນຳ ແລະ ຂະບວນການຂອງ SWIFT ທີ່ເໝາະສົມກັບບໍລິການຂໍ້ຄວາມ SWIFT ຫຼື ໃຊ້ໃນການສົ່ງ ແລະ ຮັບຂໍ້ຄວາມ SWIFT ຕາມທີ່ໄດ້ກໍ່ຕັ້ງຂຶ້ນໃນຂໍ້ຕົກລົງ SWIFT ຫຼື ຕາມທີ່ SWIFT ຫຼື ທະນາຄານແຈ້ງການໃຫ້ກັບລູກຄ້າ (ຫຼື ຜູ້ໃຊ້ທີ່ມີອຳນາດເຕັມໃຊ້ສິດ).

**ຂໍ້ຄວາມ SWIFT** ໝາຍເຖິງການສື່ສານ, ຂໍ້ຄວາມ ຫຼື ເອກະສານທາງອີເລັກໂທຼນິກ ທີ່ຖືກສົ່ງໂດຍໃຊ້ບໍລິການຂໍ້ຄວາມ SWIFT.

**ບໍລິການຂໍ້ຄວາມ SWIFT** ໝາຍເຖິງບໍລິການຂໍ້ຄວາມຂອງ SWIFT ທີ່ໃຫ້ບໍລິການໃນການແລກປ່ຽນຂໍ້ຄວາມ SWIFT ລະຫວ່າງລູກຄ້າ ຫຼື ຜູ້ໃຊ້ SWIFT ທີ່ມີອຳນາດເຕັມໃຊ້ສິດເປັນປະຈຳ ລວມທັງບໍລິການ SCORE ຫຼື MACUG.

**ອາກອນ** ໝາຍເຖິງອາກອນ, ຄ່າພາສີ, ພາສີສຸລະກາກອນ, ພາສີ ຫຼື ຄ່າທຳນຽມ ຫຼື ການຫັກໄວ້ທີ່ມີລັກສະນະແບບດຽວກັນ (ລວມທັງຄ່າປັບໄໝ ຫຼື ດອກເບ້ຍຄ້າງຈ່າຍທີ່ກ່ຽວພັນກັບຄວາມ ບໍ່ສາມາດໃນການຊຳລະ ຫຼື ຄວາມລ້າຊ້າໃນການຊຳລະ).

**ກໍລະນີຍົກເລີກ** ໝາຍເຖິງເຫດການທີ່ເກີດຂຶ້ນກັບລູກຄ້າໂດຍມີລັກສະນະດັ່ງລຸ່ມນີ້:

(ກ) *ການລະເມີດຂໍ້ຕົກລົງ.* ຖ້າລູກຄ້າບໍ່ເຮັດຕາມ, ດຳເນີນ ຫຼື ປະຕິບັດຕາມຂໍ້ກຳນົດ ຫຼື ເງື່ອນໄຂທີ່ລະບຸໄວ້ໃນຂໍ້ຕົກລົງ ແລະ ການລະເມີດດັ່ງກ່າວບໍ່ມີການແກ້ໄຂພາຍໃນສິບສີ່ ມື້ຕາມປະຕິທິນຫຼັງຈາກທີ່ທະນາຄານແຈ້ງການລະເມີດດັ່ງກ່າວ.

(ຂ) *ການລົ້ມລະລາຍ.* ລູກຄ້າ (i) ຍຸບ, ລົ້ມລະລາຍ ຫຼື ບໍ່ສາມາດຊຳລະໜີ້ສິນ ຫຼື ຍອມຮັບໃນການບໍ່ສາມາດຊຳລະໜີ້ກ່ອນໝົດກຳນົດເປັນລາຍລັກອັກສອນ; (ii) ໂອນຊັບສິນ ຫຼື ການຈັດການໃຫ້ເປັນຜົນປະໂຫຍດຂອງເຈົ້າໜີ້; (iii) ດຳເນີນການຟ້ອງເຊິ່ງກຳລັງລໍຖ້າຄຳພິພາກສາລົ້ມລະລາຍ ຫຼື ການບັນເທົາອື່ນໆພາຍໃຕ້ກົດໝາຍລົ້ມລະລາຍ ຫຼື ກົດໝາຍອື່ນໆທີ່ສົ່ງຜົນກະທົບຕໍ່ສິດຂອງເຈົ້າໜີ້ ຫຼື ມີການຮ້ອງທຸກເພື່ອຍົກເລີກກິດຈະການ ຫຼື ຊຳລະສະສາງໜີ້ສິນ; (iv) ມີມະຕິໃຫ້ຍົກເລີກກິດຈະການ, ການຈັດການທີ່ເປັນທາງການ ຫຼື ການຊຳລະສະສາງໜີ້ສິນ; (v) ກາຍມາເປັນຕົວຕັ້ງໃນການແຕ່ງຕັ້ງຂອງຜູ້ບໍລິຫານ, ຜູ້ຊຳລະບັນຊີຊົ່ວຄາວ, ຜູ້ຮັກສາ, ຜູ້ຮັບ, ຜູ້ໄດ້ຮັບມອບໝາຍໃຫ້ດູແລຊັບສິນ, ຜູ້ດູແລ ຫຼື ເຈົ້າໜ້າທີ່ໆດູແລຊັບສິນທັງໝົດຂອງລູກຄາ; (vi) ມີພາກສ່ວນໜັ້ນຄົງຍຶດຊັບສິນທັງໝົດຂອງລູກຄ້າ; (vii) ເປັນຕົວຕັ້ງ ໃນກໍລະນີທີ່ມີຜົນກະທົບທີ່ຄ້າຍຄືກັນກັບ

ກໍລະນີທີ່ລະບຸໄວ້ໃນວັກ (i) ຫາ (vi) ຂ້າງເທິງ ຫຼື (vii) ດໍາເນີນການທີ່ລະບຸຄວາມຍິນຍອມ ຫຼື ຄວາມເຫັນດີຕໍ່ການກະທໍາ ຫຼື ສະພາບການດັ່ງທີ່ໄດ້ກ່າວມາແລ້ວນີ້;

(ຄ) *ການປ່ຽນແປງເປັນທີ່ບໍ່ເພິ່ງປະສົງ.* ມີການປ່ຽນແປງທີ່ບໍ່ເພິ່ງປະສົງໃນສະພາບການເງິນຂອງລູກຄ້າ ໂດຍທະນາຄານໃຊ້ຄວາມຮອບຄອບໃນການພິຈາລະນາອາດສົ່ງຜົນກະທົບຕໍ່ຄວາມສາມາດຂອງລູກຄ້າໃນການເຮັດຕາມພາລະພາຍໃຕ້ຂໍ້ຕົກລົງ; ແລະ

(ງ) *ຄວາມຜິດກົດໝາຍ.* ກໍລະນີ ຫຼື ສະພາບການເກີດຂຶ້ນກັບພາກສ່ວນໃດໜຶ່ງ ເຊິ່ງຜິດກົດໝາຍ ດ້ວຍເຫດຜົນຫຍັງກໍຕາມ ເພື່ອໃຫ້ພາກສ່ວນດໍາເນີນຕາມພັນທະສົມບູນ ຫຼື ບໍ່ແນ່ນອນໃດໜຶ່ງໃນການຊໍາລະ ຫຼື ການນໍາສົ່ງຕາມຂໍ້ຕົກລົງ ຫຼື ເພື່ອເຮັດຕາມຂໍ້ກໍານົດທີ່ສໍາຄັນຂອງຂໍ້ຕົກລົງ ຫຼື ເມື່ອລູກຄ້າດໍາເນີນງານຢ່າງປະໝາດ ຫຼື ລະເມີດຜູ້ຈັດການຊັບສິນ ຫຼື ຫຼັກການຄວາມໄວ້ວາງໃຈ.

**ບຸກຄົນທີສາມ** ໝາຍເຖິງຜູ້ຮັບເໝົາ, ຕົວແທນ, ທະນາຄານຜູ້ຮ່ວມມື, ພາກສ່ວນລາຍງານສິນເຊື່ອ, ຜູ້ຮັບປະກັນໄພ, ຜູ້ຮັບປະກັນໄພຕໍ່, ຜູ້ຮັບຜິດຊອບທີ່ທະນາຄານມອບໝາຍໃຫ້ເປັນຕົວແທນ ຫຼື ຜູ້ໃຫ້ບໍລິການໃນລະບົບບຸກຄົນທີສາມ (ອາດຕັ້ງຢູ່ໃນປະເທດທີ່ຈົດທະບຽນ ແລະ ຈັດຕັ້ງຂອງລູກຄ້າ ຫຼື ທະນາຄານ).

**ລະບົບບຸກຄົນທີສາມ** ໝາຍເຖິງການໃຊ້ຈ່າຍ, ການຊໍາລະໜີ້ ຫຼື ລະບົບອື່ນໆທີ່ສະໜອງ ຫຼື ຈັດຕັ້ງຂຶ້ນໂດຍບຸກຄົນທີສາມໜຶ່ງຄົນ ຫຼື ຫຼາຍກວ່ານັ້ນ.

**ຜູ້ໃຊ້** ໝາຍເຖິງບຸກຄົນໃດໜຶ່ງທີ່ລູກຄ້າໄດ້ມອບໝາຍໃຫ້ນໍາໃຊ້ຊ່ອງທາງການທະນາຄານອີເລັກໂທຼນິກ ແລະ ລວມທັງຜູ້ໃຊ້ທີ່ມີອໍານາດເຕັມໃຊ້ສິດ.

**ຄູ່ມືແນະນໍາການນໍາໃຊ້** ໝາຍເຖິງຄູ່ມືແນະນໍາ ຫຼື ເອກະສານທີ່ຄ້າຍຄືກັນສໍາລັບລູກຄ້າ ເຊິ່ງທະນາຄານຈັດພິມໃຫ້ກັບລູກຄ້າ ເປັນປະຈໍາ ກ່ຽວຂ້ອງກັບບໍລິການໂດຍທະນາຄານ ຫຼື ສາຂາ ຂອງທະນາຄານ ຈະປັບປຸງຢູ່ເປັນປະຈໍາ.

**ຖືກຕ້ອງຕາມໃບຢັ້ງຢືນອີເລັກໂທຼນິກທີ່ໃຊ້ໂດຍລູກຄ້າ** ໝາຍເຖິງ ລູກກະແຈສາທາລະນະຂອງໃບຢັ້ງຢືນອີເລັກໂທຼນິກຕາມທີ່ທະນາຄານໄດ້ບັນທຶກ ເຊິ່ງຈົດທະບຽນໃຫ້ກ່ຽວພັນກັບລູກຄ້າທີ່ມີ ສະຖານະ 'ຖືກຕ້ອງ'.

**ຕູ້ນິລະໄພ** ໝາຍເຖິງເຄື່ອງອໍານວຍຄວາມສະດວກຕູ້ນິລະໄພ ສ່ວນກາງພ້ອມລະບຸລາຍລະອຽດເປັນປະຈໍາກັບລູກຄ້າ.

**ເລກບັນຊີຈໍາລອງ** ໝາຍເຖິງເລກບັນຊີປອມທີ່ກໍານົດໃຫ້ກັບຜູ້ຈ່າຍລູກຄ້າ.

**ການຖອນ** ໝາຍເຖິງການຖອນ ຫຼື ການໂອນເງິນຈາກບັນຊີໃດໜຶ່ງ.